ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຝຶກອົບຮົມນຳໃຊ້ເຄື່ອງຈັກຄັດໄຈ້ທະນະບັດ



ໃນວັນທີ 13 ພະຈິກ 2020 ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຝຶກອົບຮົມ ໃນຫົວຂໍ້ **“ການນຳໃຊ້, ແກ້ໄຂບັນຫາຂັ້ນພື້ນຖານ ແລະ ການບຳລຸງຮັກສາເຄື່ອງຈັກຄັດໃຈ້ທະນະບັດ ຍີ່ຫໍ້ Glory ລຸ້ນ (UW-600) ສຳລັບເງິນກີບ ແລະ ລຸ້ນ (USF-100) ສຳລັບເງິນບາດ -ໂດລາ”** ໂດຍການເຂົ້າຮ່ວມ ຂອງ ທ່ານ ນາງ ພູຄຳ ໄຊຍະວົງ ຮອງຫົວໜ້າກົມພິມຈຳໜ່າຍ, ທຫລ ແລະ ທ່ານ ທຍຸຍຄຳ ຫຼວງສຸພົມ ຜູ້ອຳນວຍການບໍລິສັດ ເອັນພີ ເອກົບເມັນ ຈຳກັດ ຕົວແທນຜູ້ສະໜອງເຄື່ອງຈັກຄັດໃຈ້ທະນະບັດຢູ່ ສປປ ລາວ; ພ້ອມນັ້ນ, ກໍ່ມີພະນັກງານທີ່ກ່ຽວຂ້ອງຈາກບັນດາກົມພາຍໃນ-ສາຂາພາກ ທຫລ ເຂົ້າຮ່ວມ.

ການຝຶກອົບຮົມໃນຄັ້ງນີ້, ບັນດາຊ່ຽວຊານຂອງບໍລິສັດເອັນພີ ເອກົບເມັນ ຈຳກັດໄດ້ນຳສະເໜີຄວາມຮູ້ກ່ຽວກັບເຄື່ອງຈັກຄັດໃຈ້ທະນະບັດ, ຄວາມຮູ້ທາງດ້ານເຕັກນິກ ແລະ ປະສົບການຕົວຈິງໃນການນຳໃຊ້ເຄື່ອງຈັກດັ່ງກ່າວເຮັດໃຫ້ພະນັກງານຂອງກົມພິມຈຳໜ່າຍ, ກົມບໍລິການ ແລະ ສາຂາ ທຫລ ທັງ 5 ສາຂາໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບເຕັກນິກຂອງເຄື່ອງຈັກຄັດໃຈ້ທະນະບັດ ແລະ ກວດເງິນປອມໄດ້ຫຼາຍຂຶ້ນ ເຊິ່ງມັນຈະຊ່ວຍໃນການຄັດໃຈ້ທະນະບັດ ແລະ ກວດສອບເງິນປອມຂອງ ທຫລ ໄດ້ວ່ອງໄວຂຶ້ນ.

ທ່ານນາງ ພູຄຳ ໄຊຍະວົງ ໄດ້ກ່າວວ່າ: ເຖິງແນວໃດກໍຕາມ ພວກເຮົາມີຄວາມຈຳເປັນຕ້ອງໄດ້ແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ ລະຫວ່າງ ພະນັກງານຜູ້ທີ່ເຮັດວຽກກັບເຄື່ອງຈັກຕົວຈິງ ກັບວິຊາການຊ່ຽວຊານຂອງບໍລິສັດ ຢ່າງຕໍ່ເນື່ອງ ໂດຍຜັດປ່ຽນພະນັກງງານຜູ້ທີ່ນຳໃຊ້ຕົວຈິງເຂົ້າຮ່ຳຮຽນໃຫ້ກວ້າງຂວາງ ເພື່ອນຳບົດຮຽນຄວາມຮູ້ ແລະ ປະສົບການຕົວຈິງຈາກການຝຶກອົບຮົມໃນຄັ້ງນີ້ ມານຳໃຊ້ເຂົ້າໃນວຽກງານການຄັດໃຈ້ຂອງ ທຫລ ໃຫ້ມີປະສິດທິຜົນສູງ.




ການຝຶກອົບຮົມຄັ້ງນີ້ ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ຮັບບົດຮຽນຕົວຈິງໃນການນຳໃຊ້ເຄື່ອງຈັກດັ່ງກ່າວເຂົ້າໃນວຽກງານວິຊາສະເພາະຢ່າງມີປະສິດທິພາບ ການຝຶກອົບຮົບວຽກງານດັ່ງກ່າວໃຊ້ເວລາໜຶ່ງເວັນເຕັມ.

**# ພາບ-ຂ່າວ: ສົມອົກ ເຄນຄຳແພງ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**